ກະຊວງກະ ... ... ... ຖ ປະຊາຊົນລາວ
ກະພາບ ວັດທະນະຖາວອນ

3(1) Signature

ຄຳໄພ ມະນີວົງ

ເລກທີ 0032 /ກປ

ເຂົ້າ ລົງວັນທີ 10-3-10

ນະຄອນຫຼວງວຽງຈັນ, ວັນທີ 04 MAR 2010

ເຖິງ: ທ່ານຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ.

ເລື່ອງ: ການມອບສິດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ຂໍອະນຸຍາດ ສົ່ງໄມ້ທ່ອນ ແລະ ໄມ້ແປຮູບ ຈາກສວນປູກ ທີ່ບໍ່ແມ່ນໄມ້ຫວງຫ້າມ ແລະ ໄມ້ ພິເສດອອກຕ່າງປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້, ສະບັບເລກທີ 06/ສພຊ, ລົງວັນທີ 24/12/2007.
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ, ສະບັບເລກທີ 17/ນຍ, ລົງວັນທີ 22/9/2008 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ, ສະບັບເລກທີ 284/ຄລບ, ລົງວັນທີ 12/2/2010.

ເພື່ອປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມເນື້ອໃນທີ່ໄດ້ກຳນົດໄວ້ ໃນກົດໝາຍ ວ່າດ້ວຍ ປ່າໄມ້, ຄຳສັ່ງເລກທີ 17/ນຍ ແລະ ແຈ້ງການ ຂອງຄະນະເລຂາທິການລັດຖະບານ, ເພື່ອເປັນການຫຼຸດຜ່ອນຂັ້ນຕອນ ໃນການປະກອບເອກະສານ ກ່ຽວກັບການສົ່ງໄມ້ ຈາກສວນປູກ ທີ່ບໍ່ແມ່ນໄມ້ຫວງຫ້າມ ແລະ ໄມ້ພິເສດ ອອກຕ່າງປະເທດ.

ກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ອອກແຈ້ງການ ເຖິງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເພື່ອໃຫ້ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ, ດັ່ງລຸ່ມນີ້:

1. ການສົ່ງອອກໄມ້ຈາກສວນປູກ ທີ່ບໍ່ແມ່ນໄມ້ຫວງຫ້າມ ແລະ ໄມ້ພິເສດ (ໄມ້ວິກ, ກະຖິນນະລົງ ແລະ ກະຖິນເທພາ) ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນເຈົ້າການໃນການກວດກາ ການປະກອບເອກະສານ ກ່ອນນຳສະເໜີ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາການສົ່ງອອກຕາມພາລະບົດບາດເຊັ່ນ ໃບທະບຽນສວນປູກ, ໃບອະນຸຍາດຂຸດຄົ້ນໄມ້ປູກ, ບັນຊີການວັດແທກ ແລະ ຂຶ້ນບັນຊີ, ບົດບັນທຶກການກວດກາໄມ້ປູກ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ. ພາຍຫຼັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ອອກໃບອະນຸຍາດເຄື່ອນຍ້າຍແລ້ວ, ຈຶ່ງໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ອອກໃບຕິດຕາມການຕີກາປ້ອຍໄມ້ ແລະ ຕີຄ້ອນກາ "ປລມ" ໃສ່ທ່ອນໄມ້ ຕາມລະບຽບການ.
2. ການສົ່ງອອກໄມ້ຈາກສວນປູກ ປະເພດໄມ້ຫວງຫ້າມ, ໄມ້ພິເສດ ແລະ ໄມ້ເບເບນມາກ ແມ່ນໃຫ້ປະກອບເອກະສານ ທີ່ ກ່ຽວຂ້ອງຕ່າງໆ ເຊັ່ນ: ໃບທະບຽນສວນປູກ, ໃບອະນຸຍາດຂຸດຄົ້ນໄມ້ປູກ, ບັນຊີການວັດແທກ ແລະ ຂຶ້ນບັນຊີ, ບົດບັນທຶກການກວດກາໄມ້ປູກ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ແລ້ວນຳສະເໜີກະຊວງກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້າພິຈາລະນາ ຕາມລະບຽບການ ແລ້ວສົ່ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ພິຈາລະນາສົ່ງອອກ ຕາມພາລະບົດບາດ.

3. ໃນກໍລະນີ ໄມ້ທີ່ຂຸດຄົ້ນອອກຈາກສວນປູກ ເປັນໄມ້ນ້ອຍ ຊຶ່ງບໍ່ສາມາດວັດແທກໄດ້, ຂຶ້ນບັນຊີໄດ້, ບໍ່ສາມາດຄິດໄລ່ບໍລິມາດໄດ້ ແມ່ນຄິດເປັນນ້ຳໜັກ/ຊຶ່ງເປັນໂຕນໄດ້.

4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເກັບກຳຂໍ້ມູນ ແລະ ສັງລວມ ແຜນການຂຸດຄົ້ນໄມ້ປູກ ພາຍໃນທ້ອງຖິ່ນຂອງຕົນ ແລ້ວນຳສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ສັງລວມເຂົ້າໃນແຜນສະເໜີ ຂໍອະນຸມັດແຜນການປູກໄມ້ ແລະ ຟື້ນຟູປ່າ, ແຜນການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຈາກລັດຖະບານໃນແຕ່ລະສົກປີ.

5. ພາຍຫຼັງທີ່ລັດຖະບານ ໄດ້ອະນຸມັດແຜນການຂຸດຄົ້ນຄົ້ນແລ້ວ, ກະຊວງ ຈະໄດ້ແຈ້ງມອບແຜນການຂຸດຄົ້ນດັ່ງກ່າວໃຫ້ແຕ່ລະທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດ.

6. ມອບໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຈັດຕັ້ງຜັນຂະຫຍາຍ ເນື້ອໃນແຈ້ງການ ສະບັບດັ່ງກ່າວໃຫ້ມີປະສິດທິຜົນ, ພ້ອມກັນນັ້ນ ໃຫ້ສະຫຼຸບລາຍງານ ສະພາບການຈັດຕັ້ງປະຕິບັດ ແຜນການຂຸດຄົ້ນໄມ້ປູກ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃຫ້ກະຊວງ ໄດ້ຮັບຊາບ ຢ່າງເປັນປົກກະຕິທຸກໆເດືອນ, ງວດ ແລະ ປະຈຳປີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດຕາມເນື້ອໃນຈິດ ຂອງແຈ້ງການ ສະບັບນີ້ດ້ວຍ

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ດຣ. ຕີ ພົມມະສັກ